# ການນຳເຂົ້າ
# ລົດແທຣັກເຕີ້
# ຮັບໃຊ້ການຜະລິດກະສິກຳ




## ຊາວກະສິກອນ / ສະມາຊິກກຸ່ມການຜະລິດ / ສະຫະກອນ

ສາມາດນຳເຂົ້າລົດແທຣັກເຕີ ມາຮັບໃຊ້ການຜະລິດດ້ວຍຕົນເອງໄດ້ແລ້ວໂດຍປະຕິບັດຕາມເງື່ອນໄຂດັ່ງນີ້:

1. ເປັນຊາວກະສິກອນ, ສະມາຊິກກຸ່ມການຜະລິດ ຫຼື ສະຫະກອນ.
2. ຊາວກະສິກອນ ສາມາດນຳເຂົ້າໄດ້ 01 ຄັນ ຕໍ່ 01 ຄອບຄົວ ແລະ ຕ້ອງໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງບ້ານ.
3. ສະມາຊິກກຸ່ມການຜະລິດ ຫຼື ສະຫະກອນຕ້ອງໄດ້ຮັບການຢັ້ງຢືນ ແລະ ພິຈາລະນາຈຳນວນການນຳເຂົ້າຈາກຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ.
4. ສຳລັບ ລົດໄຖນາເດີນຕາມ ສາມາດນຳເຂົ້າຜ່ານຊາຍແດນທ້ອງຖິ່ນ, ດ່ານຊາຍແດນປະເພນີ ແລະ ດ່ານສາກົນ.
5. ສຳລັບລົດແທຣັກເຕີ ແບບນັ່ງຂັບ ຕ້ອງໄດ້ຂໍໃບອະນຸຍາດດ້ານເຕັກນິກຍານພາຫະນະກົນຈັກນຳເຂົ້າ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ນຳກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຕ້ອງນຳເຂົ້າຜ່ານດ່ານສາກົນເທົ່ານັ້ນ.

## ນັກທຸລະກິດ

ສາມາດນຳເຂົ້າລົດແທຣັກເຕີ ມາຮັບໃຊ້ການຜະລິດດ້ວຍຕົນເອງໄດ້ແລ້ວໂດຍປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຕ້ອງເປັນຫົວໜ່ວຍທຸລະກິດທີ່ມີໃນທະບຽນວິສາຫະກິດຢູ່ໃນ ສປປ ລາວ.
2. ຕ້ອງມີຮ້ານຈຳໜ່າຍ ແລະ ສູນບໍລິການຫຼັງການຂາຍ.
3. ຕ້ອງມີໃບອະນຸຍາດດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ (ສຳລັບຄົນຕ່າງປະເທດ).
4. ການນຳເຂົ້າລົດໄຖນາເດີນຕາມ ແລະ ລົດແທຣັກເຕີແບບນັ່ງຂັບ ຕ້ອງນຳເຂົ້າຜ່ານດ່ານສາກົນເທົ່ານັ້ນ.
5. ສຳລັບ ລົດແທຣັກເຕີ ແບບນັ່ງຂັບ ຕ້ອງໄດ້ຂໍໃບອະນຸຍາດດ້ານເຕັກນິກຍານພາຫະນະກົນຈັກນຳເຂົ້າ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ນຳກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ.

ສອບຖາມຂໍ້ມູນເພີ່ມເຕີມ: ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ, ໂທ: 021 412008